ການໄດ້ສິດນຳໃຊ້ທີ່ດິນຕາມປະເພນີ

ສະແກນສຳລັບ
ພາສາທ້ອງຖິ່ນ


ການບຸກເບີກ
ການພັດທະນາ
ການປົກປັກຮັກສາ ແລະ ນຳໃຊ້
ເຈົ້ານຳໃຊ້ທີ່ດິນຕອນນີ້ມາດົນແລ້ວບໍ?
ຂ້ອຍນຳໃຊ້ດິນຕອນນີ້ ມາ20 ກວ່າປີແລ້ວ
ມີເອກະສານ ຫຍັງຢັ້ງຢືນບໍ?
ບໍ່ມີເອກະສານ ແຕ່ນາຍບ້ານ ຢັ້ງຢືນໄດ້
ຂ້ອຍຜູ້ນຳໃຊ້ ທີ່ດິນຂ້າງຄຽງ ສາມາດຢັ້ງຢືນໄດ້

ກົດໝາຍວ່າດ້ວຍທີ່ດິນ (ສະບັບປັບປຸງ), ເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019

ມາດຕາ 130 (ໃໝ່) ການໄດ້ສິດນຳໃຊ້ທີ່ດິນຕາມປະເພນີ

ການໄດ້ສິດນຳໃຊ້ທີ່ດິນຕາມປະເພນີ ແມ່ນ ການໄດ້ສິດນຳໃຊ້ທີ່ດິນຈາກການຄອບຄອງ ແລະ ນຳໃຊ້ທີ່ດິນຂອງພົນລະເມືອງລາວ ດ້ວຍການບຸກເບີກ, ພັດທະນາ, ປົກປັກຮັກສາ ແລະ ນຳໃຊ້ທີ່ດິນ ຢ່າງເປັນປົກກະຕິ ເປັນເວລາຫຼາຍກວ່າ ຊາວປີ ກ່ອນກົດໝາຍສະບັບນີ້ມີຜົນສັກສິດ ໂດຍບໍ່ມີເອກະສານໃດ ຢັ້ງຢືນການໄດ້ມາທີ່ດິນນັ້ນ ແຕ່ມີການຢັ້ງຢືນຈາກອົງການປົກຄອງບ້ານ ແລະ ເຈົ້າຂອງສິດນຳໃຊ້ທີ່ດິນຂ້າງຄຽງ ກ່ຽວກັບການເຂົ້າຄອບຄອງ ແລະ ນຳໃຊ້ທີ່ດິນນັ້ນຢ່າງຕໍ່ເນື່ອງ ໂດຍບໍ່ມີຂໍ້ຂັດແຍ່ງ ຫຼື ມີຂໍ້ຂັດແຍ່ງ ແຕ່ກໍໄດ້ຮັບການແກ້ໄຂແລ້ວ.

ໃນໄລຍະທີ່ຍັງບໍ່ທັນໄດ້ຂຶ້ນທະບຽນອອກໃບຕາດິນໃຫ້ບຸກຄົນເທື່ອນັ້ນ ລັດ ຮັບຮູ້ ແລະ ປົກປ້ອງສິດນຳໃຊ້ທີ່ດິນຕາມປະເພນີຂອງຜູ້ກ່ຽວ ແລະ ດຳເນີນການຂຶ້ນທະບຽນອອກໃບຕາດິນໃຫ້ຕາມກົດໝາຍ.

ທຊສ MONRE
Brot für die Welt
ສະຫະພາບ ເອີຣົບ
European Union
NAFRI
ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ LIWG
JVC Japan International Volunteer Center
ໂຄງການສົ່ງເສີມ ການຮຽນຮູ້ກ່ຽວກັບທີ່ດິນ LIFE
ອົງການ ມິດຕະພາບ ເມັນໂນນາຍ
CDEA
CCL
WWF
Cord